# ຈະໄປສັກຢາປ້ອງກັນໂຣກໄດ້ຢູ່ໃສ

ການສັກຢາປ້ອງກັນໂຣກນີ້ໃຫ້ບໍຣິການໂດຍ:

- ນາຍໝໍທົ່ວໄປ
- ບາງຫ້ອງການເທສບານເມືອງ
- ບາງສູນອະນາມັຍຊຸມຊົນ

ຖ້າທ່ານບໍ່ແນ່ໃຈກ່ຽວກັບວ່າມີບໍຣິການໃດແດ່ທີ່ມີໃຫ້ຢູ່ໃນເຂດຂອງທ່ານ ທ່ານສາມາດຕິດຕໍ່ ພະແນກ ສາທາຣະນະສຸກທີ່ຢູ່ໃກ້ທ່ານທີ່ສຸດ ຕາມໝາຍເລກ 1300 066 055











ເພື່ອເອົາຂໍ້ມູນເພີ້ມຕື່ມກ່ຽວກັບການສັກຢາປ້ອງກັນໂຣກ ຈົ່ງເປີດເບິ່ງ **immunisation.health.nsw.gov.au** ແລະ ຈົ່ງມື້ໄວ້ສັກຢາ ດ້ວຍການດາວໂຫຼດ ໂດຍສະດວກ SAVE THE DATE Phone App ຫຼື ພິມເອົາ Personalised Schedule ອອກມາ.

NSW GOVERNMENT | Health

SHPN (SRC) 130051



# ຈົ່ງສັກຢາປ້ອງກັນໂຣກ ໂດຍ ປັສຈາກ ການຊັກຊ້າ ເພື່ອຊ່ວຍຮັກສາໃຫ້ພະຍາດຢູ່ໄກຕົວ






NSW GOVERNMENT | Health

## ຄວາມເປັນຈິງ

ຢາສັກປ້ອງກັນໂຣກໃຫ້ການປ້ອງກັນທີ່ດີທີ່ສຸດຖ້າຫາກວ່າໄດ້ສັກຄົບຊຸດໃຫ້ທັນເວລາ. ການເລື່ອນເວລາໃນການສັກຢາປ້ອງກັນໂຣກໃນເວລາທີ່ລູກນ້ອຍຂອງທ່ານຮູ້ສຶກບໍ່ສະບາຍນັ້ນເປັນການຕອບຮັບທີ່ປົກກະຕິທົ່ວໄປ. ແຕ່ວ່າ ຄວາມຈິງກໍຄື ເຖິງແມ່ນວ່າພວກເຂົາຈະມີພຽງນ້ຳມູກໄຫຼ ຫຼື ເປັນຫວັດໜ້ອຍນຶ່ງເທົ່ານັ້ນກໍຕາມ ພວກເຂົາກໍຍັງສາມາດຮັບການສັກຢາໄດ້. ການສັກຢາປ້ອງກັນໂຣກໃຫ້ຖືກຕາມເວລາເປັນວິທີທີ່ດີທີ່ສຸດໃນການປ້ອງກັນລູກຂອງທ່ານຈາກໂຣກທີ່ຮ້າຍແຮງຕ່າງໆ.




## ເປັນຫຍັງຈຶ່ງສັກຢາປ້ອງກັນໂຣກ



- ການສັກຢາປ້ອງກັນໂຣກເປັນວິທີທີ່ດີທີ່ສຸດໃນການປ້ອງລູກຂອງທ່ານຈາກໂຣກຮ້າຍແຮງຕ່າງໆ
- ດ້ວຍການສັກຢາປ້ອງກັນໂຣກ ທ່ານຈຶ່ງປ້ອງກັນລູກຂອງທ່ານພ້ອມທັງຊຸມຊົນທົ່ວໄປອີກດ້ວຍ
- ຍິ່ງມີຄົນຫຼາຍເທົ່າໃດທີ່ສັກຢາໃຫ້ລູກພວກເຂົາ ກໍຍິ່ງຈະເຮັດໃຫ້ຄວາມສາມາດໃນການຄວບຄຸມຢາສັກປ້ອງກັນໂຣກຮ້າຍແຮງມີຫຼາຍຂຶ້ນເທົ່ານັ້ນ.

## ຈະສັກຢາໃນຍາມໃດ

ຕາຕະລາງເວລາ ການສັກຢາປ້ອງກັນໂຣກ ຂອງຣັດ NSW ແນະນຳວ່າ ບັນດາເດັກນ້ອຍຄວນສັກຢາປ້ອງກັນໂຣກຕາມອາຍຸດັ່ງຕໍ່ລົງໄປນີ້:

- ຕອນເກີດໃໝ່
- 6–8 ອາທິດ
- 4 ເດືອນ
- 6 ເດືອນ
- 12 ເດືອນ
- 18 ເດືອນ
- 3½–4 ປີ

ມັນເປັນສິ່ງສຳຄັນໃນການສັກຢາປ້ອງກັນໂຣກໃຫ້ລູກທ່ານໃຫ້ຖືກຕາມເວລາ. ດັ່ງນັ້ນ ຈຶ່ງຈອງໄວ້ລ່ວງໜ້າ ໃນການນັດໝາຍກັບນາຍໝໍຂອງທ່ານ ຫຼື ກັບຜູ້ໃຫ້ບໍຣິການການສັກຢາປ້ອງກັນໂຣກ ແລະ ຈື່ງມື້ໄວ້ສັກຢາ.

ດາວໂຫຼດ ດ້ວຍຄວາມສະດວກ SAVE THE DATE Phone App ຫຼື ພິມເອົາ Personalised Schedule ອອກຈາກ immunisation.health.nsw.gov.au

## ບັນດາອາການຂ້າງຄຽງ

ການສັກຢາປ້ອງກັນໂຣກນີ້ປອດພັຍ ແລະ ມີປະສິດທິພາບ. ຜົນປໂຍດຂອງການສັກຢາປ້ອງກັນໂຣກນີ້ມີຫຼາຍເກີນກວ່າຄວາມສ່ຽງ. ເຖິງຢ່າງໃດກໍດີ ມັນກໍຄືກັບຢາອື່ນໆ ບາງຄັ້ງຢາສັກກໍກໍ່ໃຫ້ເກີດອາການຂ້າງຄຽງໄດ້. ຕາມປົກກະຕິແລ້ວອາການເຫຼົ່ານີ້ຈະພໍປານກາງ ແລະ ກິນເວລາພຽງສັ້ນໆ ແລະ ພົວພັນກັບຄວາມເຈັບ ໃຄ່ບວມ ແລະ ມີສີແດງຢູ່ບ່ອນສັກຢາ. ອາການຂ້າງຄຽງທີ່ຮ້າຍແຮງຈະມີໜ້ອຍທີ່ສຸດ.

ຖ້າທ່ານມີຄວາມກັງວົນກ່ຽວກັບບັນດາອາການຂ້າງຄຽງທີ່ອາດຈະເປັນໄປໄດ້ ຈື່ງສົນທະນາກັບນາຍໝໍຂອງທ່ານ ຫຼື ຜູ້ທີ່ໃຫ້ບໍຣິການການສັກຢາປ້ອງກັນໂຣກ.



## ການເກັບບັນທຶກ

ທ່ານຈະຕ້ອງເອົາບັນທຶກການສັກຢາປ້ອງກັນໂຣກຂອງລູກທ່ານໃຫ້ແກ່ ບ່ອນຮັບຝາກເດັກ ໂຮງຮຽນ ອະນຸບານ ແລະ ການຈົດຊື່ເຂົ້າໂຮງຮຽນຂອງລູກທ່ານ. ຈື່ງຕິດຕໍ່ຫ້ອງການທະບຽນການສັກຢາປ້ອງກັນໂຣກ ຕາມໂທຣະສັບ ໝາຍເລກ 1800 653 809 ເພື່ອຂໍເອົາ ໃບຢັ້ງຢືນປວັດການສັກຢາປ້ອງກັນໂຣກ.

